# WISe
## Wraparound with Intensive Services



ຊາວໜຸ່ມ

## WISe ແມ່ນຫຍັງກັນແທ້?

WISe ແມ່ນວິທີການແນວໃຫມ່ເພື່ອຈະຊ່ວຍເຫລືອຊາວຫນຸ່ມ ຜູ້ທີ່ມີບັນຫານຳສຸຂະພາບໂຣກ ຈິດໃຫ້ປະສົບຜົນສຳເຣັດຢູ່ເຮືອນ, ຢູ່ໃນໂຮງຮຽນ, ແລະ ຢູ່ໃນຊຸມນຸມຊົນ. ໂດຍຜ່ານໂຄງການ WISe, ຊາວຫນຸ່ມຈະໄດ້ຮັບການບຳບັດຮັກສາໂຣກ ແລະ ການບໍຣິການ ແລະ ການອູ້ມຊູແນວ ອື່ນໆເພື່ອຈະຊ່ວຍເຂົາເຈົ້າໃຫ້ບັນລຸເປົ້າ ຫມາຍຂອງເຂົາເຈົ້າ. WISe ໃຊ້ວິທີການແບບຄະນະທີມ ງານ, ແລະ ຊາວຫນຸ່ມຜູ້ທີ່ເຂົ້າຮ່ວມຢູ່ໃນ WISe ຈະມີຄະນະທີມ ງານທີ່ເຮັດວຽກນຳເຂົາເຈົ້າ ແລະ ຊ່ວຍປະສານງານການ ບໍຣິການ ແລະ ການອູ້ມຊູ.

## WISe ແຕກຕ່າງຈາກການບໍຣິການແນວອື່ນຢ່າງໃດ?

### ກໍ່ຕັ້ງ ແລະ ບັນລຸເປົ້າຫມາຍຂອງທ່ານເອງ

ທ່ານສົມຄວນທີ່ຈະມີປາກສຽງ ແລະ ທາງເລືອກໃນການບໍຣິ ການທີ່ທ່ານໄດ້ຮັບ. ດ້ວຍການອູ້ມຊູຈາກຄະນະທີມງານ WISe ຂອງທ່ານ, ທ່ານຈະກໍ່ຕັ້ງເປົ້າຫມາຍ ຂອງທ່ານເອງ ແລະ ແລ້ວວາງແຜນທີ່ຈະບັນລຸຜົນສຳເຣັດ.

### ສະເລີມສະລອງຄວາມເຂັ້ມແຂງຂອງທ່ານ

ຄະນະທີມງານ WISe ຂອງທ່ານຈະກໍ່ສ້າງໃສ່ສິ່ງທີ່ດຳເນີນ ໄດ້ດີຢູ່ໃນຊີວິດຂອງທ່ານ ແລະ ສິ່ງທີ່ທ່ານເກັ່ງ, ບໍ່ແມ່ນອຸບປະ ສັກທີ່ທ່ານກຳລັງປະເຊີນຫນ້າຢູ່.

### ໄດ້ຮັບຄວາມຊ່ວຍເຫລືອເມື່ອເວລາ ແລະ ບ່ອນທີ່ທ່ານຕ້ອງ ການມັນ

ການບໍຣິການຍາມພາວະສຸກເສີນຂອງ WISe cະມີໄວ້ໃຫ້ຕະລອດ 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດ. ທ່ານຈະສາມາດທີ່ຈະ ໄດ້ຮັບຄວາມຊ່ວຍເຫລືອໃນຣະຫວ່າງເວລາຫຍຸ້ງ ຍາກຈາກຄົນ ໃດຄົນນຶ່ງຜູ້ທີ່ເຂົ້າໃຈສະພາບການຂອງທ່ານແລະສາມາດທີ່ຈະ ມາເຮືອນ ຂອງທ່ານ, ໂຮງຮຽນ, ຫລື ບໍ່ວ່າບ່ອນໃດທີ່ທ່ານຈະ ສະບາຍໃຈທີ່ສຸດ.

### ປາກສຽງ ແລະ ທາງເລືອກຂອງຊາວຫນຸ່ມ

WISe ຍັງຮັບຮູ້ຈັກອີກຄືກັນວ່າຊາວຫນຸ່ມຕ້ອງການຢາກ ຈະມີປາກສຽງ ແລະ ທາງ ເລືອກໃນການປິ່ນປົວຂອງເຂົາເຈົ້າ. ອັນນີ້ຫມາຍຄວາມວ່າຊາວຫນຸ່ມໄດ້ຮັບຣາຍຣະອຽດ ທີ່ເຂົາເຈົ້າ ຕ້ອງການເພື່ອຈະເພື່ອຈະເພີ້ມກຳລັງແຮງທີ່ຈະທຳການຕັດ ສິນໃຈທີ່ດີ ກ່ຽວກັບການເບິ່ງແຍງດູແລ ແລະ ການປິ່ນປົວຂອງ ເຂົາເຈົ້າໃນການດຳເນີນງານຂອງ WISe.

## ແມ່ນໃຜແດ່ສາມາດໄດ້ຮັບ WISe?

ເພື່ອຈະໄດ້ຮັບ WISe, ທ່ານຕ້ອງມີອາຍຸຕ່ຳກວ່າ 21 ປີ ແລະ ມີເງື່ອນໄຂໄດ້ຮັບ Medicaid.

ຊາວຫນຸ່ມຄົນໃດຄົນນຶ່ງອາຍຸກາຍເກີນ 13 ປີ ສາມາດຂໍເອົາ ການກວດກັ່ນເບິ່ງ WISe ເພື່ອຈະ ຮູ້ຈັກວ່າເຂົາເຈົ້າມີເງື່ອນ ໄຂໄດ້ຮັບ ຫລື ບໍ່ (ຖ້າຫາກວ່າທ່ານມີອາຍຸຕ່ຳກວ່າ 13 ປີ, ທ່ານຕ້ອງ ມີຄຳອະນຸຍາດຈາກພໍ່ແມ່ ຫລື ຜູ້ປົກຄອງຂອງທ່ານ ກ່ອນ). WISe ຫາກໍ່ຈະເລີ້ມຕົ້ນຢູ່ໃນ ຣັດວໍຊິງຕັນ. ກ່ອນ ເດືອນຈູນ 2018, WISe ຈະມີໄວ້ຮັບໃຊ້ທົ່ວຣັດ. ເພື່ອຈະຮູ້ຈັກ ວ່າ WISe ຈະມີໄວ້ຮັບໃຊ້ເມື່ອໃດຢູ່ບ່ອນທີ່ທ່ານອາສັຍຢູ່ແລະຈະ ຕິດຕໍ່ຫາໃຜ, ເຂົ້າເບິ່ງຢູ່ທີ່: www.dshs. wa.gov/dbhr/cbh-wise.shtml.

ທ່ານສາມາດເອົາຣາຍຣະອຽດໃຫ້ທ່ານໄດ້ອີກຄືກັນກ່ຽວກັບ WISe ແລະພະແນກບໍຣິການ ແລະ ການອູ້ມຊູສຸຂະພາບໂຣກ ຈິດອື່ນໆທີ່ມີໄວ້ໃຫ້ຢູ່ໃນເຂດຂອງທ່ານຢູ່ທີ່ນີ້ໄດ້: https://www.dshs.wa.gov/bha/division-behavioral-health-and-recovery/mental-health-services-and-information ຫລື ໂດຍການໂທຫາສາຍໂທ ຟຣີຊ່ວຍເຫລືອການພັກຟື້ນໄດ້ທີ່ເລກ 866-789-1511.

## ເບື້ອງຫລັງ

ໃນປີ 2009, ຊາວຫນຸ່ມວັຍສິບປີຍື່ນຟ້ອງຣັດວໍຊິງຕັນຂຶ້ນສານ ເພື່ອວ່າຊາວຫນຸ່ມທຸກໆຄົນສາ ມາດໄດ້ຮັບການບໍຣິການປິ່ນປົວ ສຸຂະພາບໂຣກຈິດທີ່ດີກວ່າເກົ່າ. ເນື່ອງເປັນຜົນອອກມາຂອງ ຄະດີອັນນີ້, ກຸ່ມຂອງຜູ້ຊ່ຽວຊານໄດ້ກໍ່ຕັ້ງໂຄງການ "Wraparound with Intensive Services" (WISe) ຂຶ້ນມາ. ອັນນຶ່ງ ຂອງຈຸດປະສົງຂອງ WISe ແມ່ນເພື່ອຈະລຸດຜ່ອນຈຳນວນຂອງ ຊາວຫນຸ່ມຂອງຣັດວໍຊິງຕັນລົງຜູ້ທີ່ຖືກຈັດໃຫ້ຢູ່ນອກເຮືອນ ຂອງເຂົາເຈົ້າ.

***Wraparound*** *ແມ່ນວິທີການເຂັ້ມຂົ້ນ, ລວມກັນຂອງການ ເຮັດວຽກນຳບຸກຄົນຜູ້ທີ່ມີຄວາມ ຕ້ອງການສັບສົນ (ໂດຍສ່ວນ ຫລາຍແລ້ວແມ່ນເດັກນ້ອຍ, ຊາວຫນຸ່ມ, ແລະ ຄອບຄົວຂອງ ເຂົາເຈົ້າ) ເພື່ອວ່າເຂົາເຈົ້າສາມາດອາສັຍຢູ່ໃນເຮືອນຂອງ ເຂົາເຈົ້າ ແລະ ຊຸມນຸມຊົນ ແລະ ເຂົ້າໃຈຄວາມຫວັງ ແລະ ຄວາມຝັນຂອງເຂົາເຈົ້າ.*

## ຕ້ອງການຢາກຈະພົວພັນນຳບໍ່?

ປາກສຽງຂອງທ່ານສາມາດສົ່ງເສີມການບໍຣິການສຳລັບຊາວ ຫນຸ່ມໃຫ້ດີຂຶ້ນໄດ້.Family, Youth, System Partner Round Tables (FYSPRTs) ເປັນພາກສ່ວນສຳຄັນຂອງ ໂຄງຮ່າງປົກຄອງທີ່ເຮັດວຽກເພື່ອຈະທຳການປັບປຸງແກ້ໄຂໃສ່ ຣະບົບການທຳງານ.

ຮຽນຮູ້ເພີ້ມເຕີມໄດ້ຢູ່ທີ່ນີ້
FYSPRT.com



Washington State
Department of Social & Health Services
Transforming lives